ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 373 /ລບ
ນະຄອນຫຼວງວຽງຈັນ, ວັນທີ 01.12.2023

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0077/ພບ, ລົງວັນທີ 16 ມັງກອນ 2023.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ເຮັດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສະຕິຕື່ນຕົວເຄົາລົບ, ປະຕິບັດກົດໝາຍ ແລະ ລະບຽບການ ຮັບປະກັນການດຳເນີນທຸລະກິດກ່ຽວກັບແຮ່ທາດ ໃຫ້ສອດຄ່ອງຕາມກົດໝາຍ, ສັນຍາ, ລະບຽບການ ແລະ ມີປະສິດທິຜົນສູງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ການນຳໃຊ້ມາດຕະການອື່ນ ແມ່ນ ການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບກົດໝາຍ ແລະ ລະບຽບການກ່ຽວກັບແຮ່ທາດ ເປັນຕົ້ນ ການສຶກສາອົບຮົມ, ການຍຶດອຸປະກອນ, ເຄື່ອງມື, ໂຈະ ຫຼື ຖອນໃບອະນຸຍາດດຳເນີນກິດຈະການ.

**ມາດຕາ 3 ຫຼັກການກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ**

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ;
4. ຮັບປະກັນການປະຕິບັດອັດຕາປັບໃໝເປັນເອກະພາບ, ຖືກຕ້ອງ, ເປັນທຳ, ໂປ່ງໃສ ແລະ ສາມາດ ກວດສອບໄດ້.

**ມາດຕາ 4 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານແຮ່ທາດ.

## ພາກທີ II
## ການປັບໃໝ

### ໝວດທີ 1
### ການປັບໃໝບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ

**ມາດຕາ 5 ການ ຂຸດຄົ້ນ, ຊື້ ຂາຍ, ເຄື່ອນຍ້າຍ ແລະ ເກັບກູ້ແຮ່ທາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການ ຂຸດຄົ້ນ, ຊື້ ຂາຍ, ເຄື່ອນຍ້າຍ ແລະ ເກັບກູ້ແຮ່ທາດ ໂດຍບໍ່ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ຢ່າງຖືກຕ້ອງ, ຄົບຖ້ວນ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່ ຈະຖືກປັບໃໝ ດັ່ງນີ້:

1) 300.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 600.000.000 ກີບ ສຳລັບການລະເມີດຄັ້ງທີສອງ;
3) 900.000.000 ກີບ ສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

**ມາດຕາ 6 ການ ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່, ເຈົ້າໜ້າທີ່ກວດກາວຽກງານແຮ່ທາດ ແລະ ຜູ້ລົງທຶນ ຈະຖືກປັບໃໝ ດັ່ງນີ້:

1) 15.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 30.000.000 ກີບ ສຳລັບການລະເມີດຄັ້ງທີສອງ;
3) 45.000.000 ກີບ ສຳລັບການລະເມີດຄັ້ງທີສາມຂຶ້ນໄປ.

**ມາດຕາ 7 ການ ຊຸກເຊື່ອງ, ທຳລາຍ ຫຼື ຊື້ ຂາຍຕົວຢ່າງ ແຮ່ທາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊຸກເຊື່ອງ, ທຳລາຍ ຫຼື ຊື້ ຂາຍ ຕົວຢ່າງແຮ່ທາດ ທີ່ໄດ້ມາຈາກທຳມະຊາດ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;

2) 10.000.000 ກີບ ສໍາລັບການລະເມີດຄັ້ງທີສອງ;
3) 15.000.000 ກີບ ສໍາລັບການລະເມີດຄັ້ງທີສາມຂຶ້ນໄປ.

**ມາດຕາ 8 ການ ຍ້າຍ, ປ່ຽນແປງ ຫຼື ທໍາລາຍ ເຄື່ອງໝາຍເຂດອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຍ້າຍ, ປ່ຽນແປງ ຫຼື ທໍາລາຍ ເຄື່ອງໝາຍເຂດອະນຸຍາດສໍາປະທານ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 10.000.000 ກີບ ສໍາລັບການລະເມີດຄັ້ງທີສອງ;
3) 15.000.000 ກີບ ສໍາລັບການລະເມີດຄັ້ງທີສາມຂຶ້ນໄປ.

## ໝວດທີ 2
## ການປັບໃໝຜູ້ລົງທຶນ

**ມາດຕາ 9 ການ ຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ, ປຸງແຕ່ງ ຫຼື ຊື້ ຂາຍແຮ່ທາດ**

ຜູ້ລົງທຶນ ທີ່ດໍາເນີນການ ຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ, ປຸງແຕ່ງ ຫຼື ຊື້ ຂາຍແຮ່ທາດ ໂດຍບໍ່ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ຢ່າງຖືກຕ້ອງ, ຄົບຖ້ວນ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່ ຈະຖືກປັບໃໝ ດັ່ງນີ້:

1) 1.000.000.000 ກີບ ສໍາລັບການລະເມີດການຊອກຄົ້ນ ແລະ ສໍາຫຼວດແຮ່ທາດ;
2) 2.000.000.000 ກີບ ສໍາລັບການລະເມີດການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ;
3) 1.000.000.000 ກີບ ສໍາລັບການລະເມີດການຊື້ ຂາຍແຮ່ທາດ.

**ມາດຕາ 10 ການ ຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ບໍ່ຖືກຕາມແຜນການທີ່ໄດ້ຮັບຮອງ, ນອກເຂດສໍາປະທານ**

ຜູ້ລົງທຶນ ທີ່ດໍາເນີນການຊອກຄົ້ນ, ສໍາຫຼວດ ບໍ່ຖືກຕາມແຜນການທີ່ໄດ້ຮັບຮອງ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

ຜູ້ລົງທຶນ ທີ່ດໍາເນີນການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ບໍ່ຖືກຕາມແຜນການທີ່ໄດ້ຮັບຮອງ ຈະຖືກປັບໃໝ ດັ່ງນີ້:

1) 150.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 300.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

ຜູ້ລົງທຶນ ທີ່ດໍາເນີນການຊອກຄົ້ນ ແລະ ສໍາຫຼວດ ຢູ່ນອກເຂດສໍາປະທານ ຈະຖືກປັບໃໝ ດັ່ງນີ້:

1) 100.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 200.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

ຜູ້ລົງທຶນ ທີ່ດໍາເນີນການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ຢູ່ນອກເຂດສໍາປະທານ ຈະຖືກປັບໃໝ ດັ່ງນີ້:

1) 200.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 400.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 11 ການ ຊື້ ຂາຍ ແຮ່ທາດໂດຍບໍ່ມີການຢັ້ງຢືນແຫຼ່ງທີ່ມາຂອງແຮ່ທາດ**

ຜູ້ລົງທຶນ ທີ່ດຳເນີນການຊື້ ຂາຍ ແຮ່ທາດ ໂດຍບໍ່ມີການຢັ້ງຢືນແຫຼ່ງທີ່ມາຂອງແຮ່ທາດ ຈະຖືກປັບໃໝ 300.000.000 ກີບ.

**ມາດຕາ 12 ການ ຍ້າຍ, ປ່ຽນແປງ ຫຼື ທຳລາຍ ປ້າຍ, ເຄື່ອງໝາຍເຂດສຳປະທານ**

ຜູ້ລົງທຶນ ທີ່ດຳເນີນການຍ້າຍ, ປ່ຽນແປງ ຫຼື ທຳລາຍປ້າຍ, ເຄື່ອງໝາຍເຂດສຳປະທານ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 13 ການ ຂຸດຄົ້ນ, ຊື້ ຂາຍ, ເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດສະຫງວນ ແລະ ແຮ່ທາດຫວງຫ້າມ**

ຜູ້ລົງທຶນ ທີ່ດຳເນີນການຂຸດຄົ້ນ, ຊື້ ຂາຍ, ເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດສະຫງວນ ແລະ ແຮ່ທາດຫວງຫ້າມ ຈະຖືກປັບໃໝ 1.000.000.000 ກີບ.

**ມາດຕາ 14 ການເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ**

ຜູ້ລົງທຶນ ທີ່ດຳເນີນການເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດ ແລະ ບໍ່ຖືກຕາມເງື່ອນໄຂຂອງການເຄື່ອນຍ້າຍແຮ່ທາດ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 15 ການນຳໃຊ້ໃບອະນຸຍາດ**

ຜູ້ລົງທຶນ ຫາກໄດ້ມອບ, ໂອນ ຫຼື ຂາຍ, ນຳໃຊ້ ໃບອະນຸຍາດຂຸດຄົ້ນ ເພື່ອຮ່ວມທຶນກັບຜູ້ອື່ນ ແລະ ເປັນຫຼັກຊັບຄ້ຳປະກັນເງິນກູ້ ຫຼື ເປັນເອກະສານຕໍ່ລອງຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ 300.000.000 ກີບ.

ຜູ້ລົງທຶນ ຫາກນຳໃຊ້ໃບອະນຸຍາດສຳຫຼວດ ເພື່ອເປັນຫຼັກຊັບຄ້ຳປະກັນເງິນກູ້ ຈະຖືກປັບໃໝ 600.000.000 ກີບ.

ຜູ້ລົງທຶນ ຫາກນຳໃຊ້ໃບອະນຸຍາດຂຸດຄົ້ນ ເພື່ອເປັນຫຼັກຊັບຄ້ຳປະກັນເງິນກູ້ ຈະຖືກປັບໃໝ 1.000.000.000 ກີບ.

**ມາດຕາ 16 ການຈ້າງ ບຸກຄົນ ຂຸດຄົ້ນ ແລະ ຮ່ອນເອົາແຮ່ທາດ ທີ່ບໍ່ຖືກຕ້ອງ**

ຜູ້ລົງທຶນ ຈ້າງ ບຸກຄົນ ຂຸດຄົ້ນ ແລະ ຮ່ອນເອົາແຮ່ທາດ ທີ່ບໍ່ຖືກຕ້ອງ ດ້ວຍວິທີການຕ່າງໆ ຈະຖືກປັບໃໝ ດັ່ງນີ້:

1) 300.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 600.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 17 ການ ທຳລາຍ, ຂາຍ ແລະ ເກັບ ຕົວຢ່າງແຮ່ທາດ**

ຜູ້ລົງທຶນ ຫາກໄດ້ທຳລາຍຕົວຢ່າງແຮ່ທາດ, ຂາຍຕົວຢ່າງແຮ່ທາດ ແລະ ເກັບຕົວຢ່າງແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 100.000.000 ກີບ.

**ມາດຕາ 18 ການໃຊ້ຄວາມຮຸນແຮງ ຫຼື ແອບອ້າງຊື່ຜູ້ອື່ນ**

ຜູ້ລົງທຶນ ຫາກໄດ້ໃຊ້ຄວາມຮຸນແຮງ ຫຼື ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່, ເຈົ້າໜ້າທີ່ກວດກາວຽກງານແຮ່ທາດ ແລະ ປະຊາຊົນ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 19 ການລາຍງານບໍ່ສອດຄ່ອງກັບຄວາມເປັນຈິງ ຫຼື ປິດບັງຂໍ້ມູນ**

ຜູ້ລົງທຶນ ຫາກໄດ້ລາຍງານບໍ່ສອດຄ່ອງກັບຄວາມເປັນຈິງ ຫຼື ປິດບັງຂໍ້ມູນ ກ່ຽວກັບແຮ່ທາດ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 20 ການ ຊື້ ຂາຍ ຜະລິດຕະພັນແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ລົງທຶນ ຫາກໄດ້ ຊື້ ຂາຍ ຜະລິດຕະພັນແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ ເປັນຕົ້ນ ຊື້ ຂາຍ ໂດຍບໍ່ຜ່ານຕະຫຼາດ ຊື້ ຂາຍ ແຮ່ທາດຂອງພາຍໃນ ຫຼື ສາກົນ ລວມທັງການ ຊື້ ຂາຍ ທີ່ບໍ່ຜ່ານລະບົບທະນາຄານ ຈະຖືກປັບໃໝ ດັ່ງນີ້:

1) 150.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 300.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 21 ການນໍາໃຊ້ໃບອະນຸຍາດ ບໍ່ຖືກຕາມການອະນຸຍາດ**

ຜູ້ລົງທຶນ ຫາກໄດ້ນໍາໃຊ້ໃບອະນຸຍາດ ບໍ່ຖືກຕາມການອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1) 500.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 1.000.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 22 ການນໍາໃຊ້ໃບອະນຸຍາດ ທີ່ໝົດອາຍຸ**

ຜູ້ລົງທຶນ ຫາກໄດ້ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບແຮ່ທາດ ທີ່ໝົດອາຍຸ ຈະຖືກປັບໃໝ 20.000.000 ກີບ.

ຜູ້ໄດ້ຮັບອະນຸຍາດດໍາເນີນທຸລະກິດໃຫ້ການບໍລິການ ທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຫາກນໍາໃຊ້ໃບອະນຸຍາດ ທີ່ໝົດອາຍຸ ຈະຖືກປັບໃໝ 10.000.000 ກີບ.

**ມາດຕາ 23 ການບໍ່ມີ ແລະ ບໍ່ປະຕິບັດ ມາດຕະການ ຄວາມປອດໄພ ແລະ ສຸຂະພາບແຮງງານ**

ຜູ້ລົງທຶນ ທີ່ບໍ່ມີມາດຕະການ ຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ລະບຽບຄວາມປອດໄພສະເພາະຂອງໂຄງການ ແລະ ແຮງງານ, ການຝຶກອົບຮົມຄວາມປອດໄພ, ການປະກອບອຸປະກອນປ້ອງກັນໄພແຮງງານ, ການຕິດຕັ້ງປ້າຍຫ້າມ-ປ້າຍເຕືອນໄພ, ໜ່ວຍງານແພດປະຈໍາພາກສະໜາມ, ສູນປິ່ນປົວສຸຂະພາບເບື້ອງຕົ້ນ, ການປະກັນສັງຄົມ ແລະ ການກວດກາສຸຂະພາບປະຈໍາປີ ລວມທັງການບໍ່ບັງຄັບຜູ້ອອກແຮງງານ ໃຫ້ປະຕິບັດມາດຕະການ ຄວາມປອດໄພ ແລະ ສຸຂະພາບແຮງງານ ຈະຖືກປັບໃໝ ດັ່ງນີ້:

1) 40.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;
2) 80.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 24 ການເກັບຮັກສາທາດເຄມີ ບໍ່ຖືກຕ້ອງຕາມເຕັກນິກ ຫຼື ການນຳໃຊ້ທາດເຄມີ ບໍ່ສອດຄ່ອງຕາມເປົ້າໝາຍ**

ຜູ້ລົງທຶນ ທີ່ເກັບຮັກສາທາດເຄມີ ບໍ່ຖືກຕ້ອງຕາມເຕັກນິກ ຫຼື ການນຳໃຊ້ ບໍ່ສອດຄ່ອງຕາມເປົ້າໝາຍ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 25 ການບໍ່ປະຕິບັດມາດຕະການປົກປັກຮັກສາສິ່ງແວດລ້ອມ**

ຜູ້ລົງທຶນ ທີ່ບໍ່ປະຕິບັດມາດຕະການປົກປັກຮັກສາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 26 ການບໍ່ລາຍງານຄວາມຄືບໜ້າປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ**

ຜູ້ລົງທຶນ ທີ່ດຳເນີນທຸລະກິດກ່ຽວກັບແຮ່ທາດ ບໍ່ລາຍງານຄວາມຄືບໜ້າປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 6.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 27 ການບໍ່ລາຍງານກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ**

ຜູ້ລົງທຶນ ທີ່ບໍ່ລາຍງານກ່ຽວກັບອຸປະຕິເຫດ ຫຼື ປາກົດການອື່ນທີ່ເກີດຂຶ້ນຈາກກິດຈະການ ກ່ຽວກັບແຮ່ທາດ ຊຶ່ງມີ ຫຼື ອາດຈະມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ຫຼື ສຸຂະພາບຂອງບຸກຄົນ ຫຼື ຊຸມຊົນ ພາຍໃນ ຊາວສີ່ ຊົ່ວໂມງ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 28 ການບໍ່ປະຕິບັດຕາມການຕົກລົງ, ການຊົດເຊີຍ ແລະ ໃຊ້ແທນຄ່າເສຍຫາຍ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບ**

ຜູ້ລົງທຶນ ທີ່ບໍ່ປະຕິບັດຕາມການຕົກລົງ, ການຊົດເຊີຍ ແລະ ໃຊ້ແທນຄ່າເສຍຫາຍ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ຕາມການຕົກລົງ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 29 ການບໍ່ປະຕິບັດພັນທະຄ່າສຳປະທານໃຫ້ລັດ**

ຜູ້ລົງທຶນ ທີ່ບໍ່ປະຕິບັດພັນທະຄ່າສຳປະທານໃຫ້ລັດ ຕາມທີ່ໄດ້ຕົກລົງໃນສັນຍາ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2) 100.000.000 ກີບ ສຳລັບການລະເມີດຄັ້ງທີສອງ.

**ມາດຕາ 30 ການບໍ່ມີແຜນການປິດບໍ່ແຮ່**

ຜູ້ລົງທຶນ ທີ່ບໍ່ມີແຜນການປິດບໍ່ແຮ່ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;

2) 100.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 31 ການບໍ່ປະຕິບັດການຄໍ້າປະກັນການປິດບໍ່ແຮ່**

ຜູ້ລົງທຶນ ທີ່ບໍ່ວາງເງິນຄໍ້າປະກັນການປິດບໍ່ແຮ່ ຕາມກົດໝາຍ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;

2) 20.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

**ມາດຕາ 32 ການບໍ່ໃຫ້ການຮ່ວມມື ແລະ ບໍ່ອໍານວຍຄວາມສະດວກແກ່ເຈົ້າໜ້າທີ່ຂອງລັດ ໃນການກວດກາວຽກງານແຮ່ທາດ**

ຜູ້ລົງທຶນ ທີ່ບໍ່ໃຫ້ການຮ່ວມມື ແລະ ບໍ່ອໍານວຍຄວາມສະດວກແກ່ເຈົ້າໜ້າທີ່ຂອງລັດ ໃນການກວດກາວຽກງານແຮ່ທາດ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການລະເມີດຄັ້ງທີໜຶ່ງ;

2) 10.000.000 ກີບ ສໍາລັບການລະເມີດຄັ້ງທີສອງ.

## ພາກທີ III
## ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ

**ມາດຕາ 33 ມາດຕະການອື່ນ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ນອກຈາກຖືກປັບໃໝ ຕາມດໍາລັດສະບັບນີ້ແລ້ວ ຍັງຈະຖືກ ກ່າວເຕືອນ, ເຮັດບົດບັນທຶກ, ຍຶດ ວັດຖຸປະກອນ, ກົນຈັກ, ເຄື່ອງມື ທີ່ນໍາໃຊ້ເຂົ້າໃນການລະເມີດ ພ້ອມທັງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 34 ມາດຕະການອື່ນ ຕໍ່ຜູ້ລົງທຶນ**

ຜູ້ລົງທຶນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ນອກຈາກຖືກປັບໃໝ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ແລ້ວ ຍັງຖືກປະຕິບັດມາດຕະການອື່ນ ດັ່ງນີ້:

1. ກ່າວເຕືອນ, ເຮັດບົດບັນທຶກ, ຍຶດ ຕົວຢ່າງ, ຜົນຜະລິດ, ອຸປະກອນກົນຈັກ ທີ່ນໍາໃຊ້ເຂົ້າໃນການລະເມີດ ພ້ອມທັງ ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ ສໍາລັບການລະເມີດຄັ້ງທີໜຶ່ງ;
2. ເຮັດບົດບັນທຶກ, ຍຶດ ຕົວຢ່າງ, ຜົນຜະລິດ, ອຸປະກອນກົນຈັກ ທີ່ນໍາໃຊ້ເຂົ້າໃນການລະເມີດ, ໂຈະໃບອະນຸຍາດ ພ້ອມທັງ ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ ສໍາລັບການລະເມີດຄັ້ງທີສອງ;
3. ເຮັດບົດບັນທຶກ, ຍຶດ ຕົວຢ່າງ, ຜົນຜະລິດ, ອຸປະກອນກົນຈັກ ທີ່ນໍາໃຊ້ເຂົ້າໃນການລະເມີດ, ຖອນໃບອະນຸຍາດ ພ້ອມທັງ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ສໍາລັບການລະເມີດຄັ້ງທີສາມ.

## ພາກທີ IV
## ການຄຸ້ມຄອງ ແລະ ການນຳໃຊ້ເງິນ ທີ່ໄດ້ມາຈາກການປັບໃໝ

**ມາດຕາ 35 ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ**

ເງິນປັບໃໝທີ່ເກັບໄດ້ຈາກການລະເມີດດຳລັດສະບັບນີ້ ເຈັດສິບສ່ວນຮ້ອຍ (70%) ມອບເຂົ້າງົບປະມານແຫ່ງລັດ ແລະ ສາມສິບສ່ວນຮ້ອຍ (30%) ໃຫ້ນຳໃຊ້ເຂົ້າໃນວຽກງານແຮ່ທາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງດຳລັດສະບັບນີ້.

**ມາດຕາ 36 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ຈັດຝຶກອົບຮົມ, ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ;
2. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ;
3. ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່ ທີ່ຮັບຜິດຊອບວຽກງານການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ;
4. ຈັດຊື້ ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ວຽກງານການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ;
5. ນຳໃຊ້ເຂົ້າໃນການປະຕິບັດວຽກງານອື່ນ ກ່ຽວກັບແຮ່ທາດ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໂດຍປະສານສົມທົບກັບບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ເມສາ 2024 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**